ຮຽນ ອາຈານເງິນແຫ່ງ ເກດຕະວົງ ອະດີດຜູ້ອຳນວຍການວິທຍາລັຍຄຣູສວັນນະເຂດ
ຮຽນ ບັນດາອະດີດອາຈານຈາກວິທຍາລັຍຄຣູສວັນນະເຂດທຸກໆທ່ານ
ຮັກແພງແລະນັບຖື ບັນດາອະດີດນັກສຶກສາວິທຍາລັຍຄຣູສວັນນະເຂດທຸກໆທ່ານ
ຮັກແພງແລະນັບຖື ເພື່ອນມິດຈາກຕ່າງແດນ ແລະພີ່ນ້ອງຊາວອາຣິໂຊນາທຸກໆທ່ານ

ຂ້າພະເຈົ້າ ຂັນເງິນ ວິລາວັນ ພ້ອມດ້ວຍສາມີ ແລະລູກສາວທັງສອງ ຂໍສະແດງຄວາມຂອບໃຈຢ່າງລົ້ນເຫລືອ ຕໍ່ບັນດາທ່ານທີ່ໄດ້ມາຮ່ວມໃນງານເຕົ້າໂຮມກັນຄັ້ງທຳອິດ (First Reunion in 30 years) ຂອງພວກເຮົາ. ຂ້າພະເຈົ້າແລະຄອບຄົວ ໄດ້ຮັບຄວາມຊົມຊື່ນ ຍິນດີຫລາຍທີ່ສຸດໃນຊີວິດ ແລະຂໍຈັດເປັນຄັ້ງປະຫວັດສາດ, ເພາະວ່າໄດ້ມີໂອກາດຮັບໃຊ້ບໍຣິການພວກທ່ານຢ່າງສຸດໃຈ. ສິ່ງສຳຄັນທີ່ສຸດກໍຄື "ຍ້ອນວ່າກຳລັງໃຈ ແລະ ນ້ຳໃຈອັນສູງສົ່ງ ຈາກບັນດາທ່ານທັງຫມົດ ທີ່ໄດ້ເດີນທາງມາຮ່ວມນັ້ນ ໄດ້ເຮັດໃຫ້ງານນີ້ສຳເຣັດລົງ ຈົນເກີນຄວາມຄາດຝັນໄວ້. ນັບແຕ່ວັນ REUNION ເປັນຕົ້ນມາ ຄວາມຮູ້ສຶກ ຂອງຂ້າພະເຈົ້າ ກໍຄືໄດ້ມີ ພວກທ່ານທັງໝົດຢູ່ໃນດວງໃຈ ແລະ ຂໍໃຫ້ ຄວາມເປັນມິດ ໃກ້ຊິດສນິດສນົມ ແລະຄວາມຊົງຈຳອັນດີ ທີ່ໄດ້ຈາກ ງານນີ້ ຈົ່ງຍືນຍົງຄົງຕົວ ຕລອດໄປເທີ້ນ.

ຂ້າພະເຈົ້າ ບໍ່ສາມາດຈະກ່າວເຖິງຊື່ ໝົດທຸກຄົນລົງໃນຈົດໝາຍສະບັບນີ້ໄດ້ ແຕ່ກໍຂໍກ່າວພິເສດ ສຳລັບບາງທ່ານ ທີ່ໄດ້ ໃຫ້ຄວາມຮ່ວມມືແລະບໍຣິການ ຄຽງບ່າຄຽງໄລ່ກັບຂ້າພະເຈົ້າຕລອດມາ ກ່ຽວກັບງານຄັ້ງປວັດສາດນີ້ ເຊັ່ນ: ສາມີຂອງຂ້າພະເຈົ້າເອງ ທ່ານທົງສວັດ, ອາຈານເງິນແຫ່ງ, ອາຈານວັນພິລາ, ອາຈານຄຳກົ່ງ, ອາຈານບຸນມີ, ທ່ານໝູ, ນ້ອງສີພັນດອນ, ເອື້ອຍບຸນຮົ່ມ ແລະ ທ່ານອິນທະຫວາ. ພວກເພິ່ນໄດ້ໃຫ້ກຳລັງໃຈຊຸກຍູ້ ແລະ ເອົາໃຈໃສ່ ຄຽງບ່າຄຽງໄລ່ຕລອດມາ "**ຂໍຂອບໃຈ!**" ນອກຈາກນີ້ ຍັງມີບາງທ່ານທີ່ໄດ້ ບໍຣິຈາກເງິນທອງສິ່ງຂອງ ເຄື່ອງດື່ມຕ່າງໆ ໃຫ້ແກ່ງານຂອງພວກເຮົາ; ບາງທ່ານໄດ້ທຸ້ມເທເຫື່ອແຮງຮັບທຳອາຫານຊ່ວຍ; ບາງທ່ານກໍໄດ້ ສລະເວລາມາຊ່ວຍງານຂອງພວກເຮົາ ຈົນສຳເຣັດ; ແລະບາງທ່ານຍັງໄດ້ໃຫ້ທີ່ພັກພາອາສັຍແກ່ພວກເຮົາອີກດ້ວຍ ທັງຫມົດນີ້ ຂ້າພະເຈົ້າຂໍ "**ຈົດຈຳບຸນຄຸນ!**" ຂອງພວກທ່ານ ຕລອດໄປ.

ອີກປະການນຶ່ງ, ເພື່ອເປັນການກະຈ່າງແຈ້ງ ແລະໃຫ້ສອດຄ່ອງກັບການຕົກລົງກັນ ກ່ຽວກັບການໃຊ້ຈ່າຍໃນງານ ຂອງພວກເຮົາ ຂ້າພະເຈົ້າ ຂໍແຈ້ງໃຫ້ພວກທ່ານຮູ້ ເປັນສລຸບລວມ ດັ່ງນີ້: ຈຳນວນຄົນລົງທະບຽນ **81 ທ່ານ** ຈຳນວນເງິນທີ່ໄດ້ຮັບທັງໝົດ (ລວມທັງຜູ້ບໍຣິຈາກພິເສດ) **$9,100.00**; ກ່ຽວກັບການໃຊ້ຈ່າຍນັ້ນ ຂ້າພະເຈົ້າຂໍແຈ້ງໃຫ້ ຊາບວ່າ ຈ່າຍ**ເກີນ**ລາຍໄດ້. ແຕ່ທາງຄອບຄົວຂອງຂ້າພະເຈົ້າ ຍິນດີ ທີ່ຈະເສັຽສລະ

ເພາະວ່າຄວາມດີໃຈຊົມຊື່ນໃນຊຸດນີ້ ແມ່ນລົ້ນເຫລືອຫລາຍທີ່ສຸດ ແລະພູມໃຈທີ່ໄດ້ມີສ່ວນພິເສດໃນການຮັບໃຊ້. ການທີ່ພວກຂ້າພະເຈົ້າ ບໍ່ຢາກແຈ້ງຈຳນວນທີ່ໄດ້ຈ່າຍທັງໝົດນັ້ນ ກໍເພາະຢ້ານວ່າ ບັນດາທ່ານຈະໜັກໃຈນຳ ແລະບໍ່ຢາກໃຫ້ເປັນພາຣະໜັກໃຈ ຂອງພວກທ່ານ. ອັນນີ້ມັນເປັນຄວາມຕັ້ງໃຈ ແລະຄວາມພໍໃຈ ຂອງ ພວກຂ້າພະເຈົ້າຢ່າງແທ້ຈິງ. ດັ່ງນັ້ນ ຂໍຈົ່ງໃຫ້ຖືວ່າເປັນ ຂອງຂັວນ ແລະ ນ້ຳໃຈ ຈາກຄອບຄົວ "ວິລາວັນ" ກໍແລ້ວກັນ. ແຕ່ຖ້າວ່າຍັງມີຜູ້ໃດ ສົນໃຈຢາກຮູ້ຈັກລາຍລະອຽດ ກ່ຽວກັບເຣື່ອງນີ້ ຂໍເຊີນຕິດຕໍ່ຫາ ຂ້າພະເຈົ້າທາງສ່ວນຕົວ ເພາະວ່າໄດ້ມີ “ລາຍລະອຽດ ແລະ Receipts” ເກັບກຳໄວ້ຮຽບຮ້ອຍ.

ສຳລັບບາງທ່ານທີ່ໄດ້ຮັບຮູ້ໄປແລ້ວ ແລະໄດ້ໃຫ້ຄວາມຊ່ວຍເຫລືອແກ່ຂ້າພະເຈົ້າແລ້ວນັ້ນ, ຂ້າພະເຈົ້າກໍຂໍ **“ຂອບໃຈນຳເປັນພິເສດ."** ທ້າຍສຸດນີ້ ຖ້າຫາກມີສິ່ງໃດ ທີ່ເຫັນວ່າ **ຂາດເຂີນ, ບໍ່ພຽງພໍ, ຫລືບໍ່ໄດ້ຕາມໃຈມັກ** ພວກຂ້າພະເຈົ້າ ໃນນາມເຈົ້າພາບທ້ອງຖິ່ນ ແລະໃນນາມເຈົ້າຂອງບ້ານ ຮ່ວມກັບຄນະຈັດງານນີ້ ຕ້ອງ **ຂໍໂທດຂໍອະພັຍມາຍັງພວກທ່ານດ້ວຍ** ແລະ ຍິນດີຮັບການ **ຕິຊົມຕ່າງໆ** ເພື່ອວ່າການຮັບໃຊ້ຂອງພວກເຮົາ ຈະໄດ້ມີການປັບປຸງໃຫ້ດີຂື້ນໃນອະນາຄົດ. ທ້າຍສຸດນີ້ ຖ້າຫາກວ່າພວກເຮົາຈະມີ **“2ND REUNION”** ໃນຂັ້ນຕໍ່ໄປ ຂ້າພະເຈົ້າ ຫວັງໃຈຢ່າງຍິ່ງວ່າ ຄົງຈະໄດ້ມີໂອກາດພົບພໍ້ກັບບັນດາທ່ານອີກ ແລະກໍຄົງຈະໄດ້ພົບພໍ້ ຜູ້ທີ່ຍັງບໍ່ໄດ້ມາຮ່ວມງານ ຂອງພວກເຮົາໃນຄັ້ງນີ້ ອີກດ້ວຍ.

ໂອກາດນີ້ ງານສັງສັນແລະການພົບພໍ້ເພື່ອນເກົ່າ ຂອງພວກເຮົາກໍໄດ້ ສຳເຣັດເສັດຊິ້ນລົງຢ່າງຈົບງາມ ແລະຜ່ານພົ້ນ ໄປໂດຍດີ, ຄວາມລື້ງແກ່ນຊຶ່ງກັນແລະກັນກໍໜັກແໜ້ນຂື້ນ ແຕ່ລະຄົນ ກໍໄດ້ກັບຕ່າວ ຄືນບ້ານຂອງໃຜລາວ ຢ່າງຮຽບຮ້ອຍໄປຫມົດແລ້ວ. ມາບັດນີ້ ພວກທ່ານທັງຫມົດ ກໍໄດ້ຮູ້ຈັກທ້ອງຖິ່ນທີ່ພວກຂ້າພະເຈົ້າ ພັກພາອາສັຍ ຢູ່ນີ້ແລ້ວ ສະນັ້ນ ຈິ່ງຢາກຂໍເຊີນຊວນມາຍັງພວກທ່ານ ຈົ່ງໄດ້ໄປຫາ ມາແວ່ແລະຢ້ຽມຢາມດ້ວຍ. ພວກເຮົາຍິນດີຕ້ອນຮັບ ທຸກໆທ່ານ ທຸກໆໂອກາດ ແລະທຸກໆເວລາ.

ຮັກແພງ, ນັບຖື ແລະຄິດເຖິງສເມີ,

ຂັນເງິນ ວິລາວັນ ພ້ອມຄອບຄົວ